ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 5071 /ກງ

ນະຄອນຫຼວງວຽງຈັນ, ວັນທີ 24 ທັນວາ 2019

# ຄຳສັ່ງ

## ວ່າດ້ວຍ ມາດຕະການຄຸ້ມຄອງ ການຈ່າຍລ່ວງໜ້າ ແລະ ການເກັບກູ້ຄືນ

**ເຖິງ : - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ;**

**- ເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າແຂວງ;**

**ທີ່ນັບຖື.**

- ອີງຕາມ ກົດໝາຍ ວ່າດ້ວຍ ງົບປະມານແຫ່ງລັດ ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ດຳລັດ ວ່າດ້ວຍ ຄັງເງິນແຫ່ງຊາດ ສະບັບເລກທີ 259/ນຍ, ລົງວັນທີ 01 ມິຖຸນາ 2010;
- ອີງຕາມ ບົດລາຍງານຂອງຄັງເງິນແຫ່ງຊາດ ສະບັບເລກທີ 6476/ຄງຊ, ລົງວັນທີ 19 ທັນວາ 2019.

ເພື່ອເປັນການເພີ່ມທະວີ ການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ຕາມແຜນສະພາແຫ່ງຊາດ ຮັບຮອງ, ນຳໃຊ້ງົບປະມານແຫ່ງລັດ ມີປະສິດທິພາບ ແລະ ມີປະສິດທິຜົນສູງສຸດ ໃຫ້ແກ່ການພັດທະນາເສດຖະກິດສັງຄົມ, ຈັດບູລິມະສິດໜ້າວຽກໃຫ້ມີແຜນງານ /ໂຄງການ ແລະ ແຜນເງິນ ຢ່າງຊັດເຈນ,ໂປ່ງໃສ ແລະ ສາມາດກວດສອບໄດ້; ສະກັດກັ້ນການລະເມີດວິໄນດ້ານການເງິນ, ການຈ່າຍເກີນແຜນ, ຈ່າຍນອກແຜນງົບປະມານແຫ່ງລັດ; ຫັນການຄຸ້ມຄອງການເງິນ ໃຫ້ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ.

**ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ ອອກຄຳສັ່ງ:**

1. ໃຫ້ບັນດາ ກະຊວງ, ອົງການຈັດຕັ້ງທຽບເທົ່າຂັ້ນສູນກາງ, ອຳນາດການປົກຄອງທ້ອງຖິ່ນ ແຕ່ລະຂັ້ນ ເພີ່ມທະວີຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີຂອງຕົນ ຕາມແຜນທີ່ສະພາແຫ່ງຊາດ ຮັບຮອງຢ່າງເຂັ້ມງວດ, ປະຕິບັດຕາມຫຼັກການລວມສູນງົບປະມານແຫ່ງລັດ;
2. ຫ້າມ ຫົວໜ່ວຍງົບປະມານ ຂັ້ນສູນກາງ ແລະ ອຳນາດການປົກຄອງທ້ອງຖິ່ນ ແຕ່ລະຂັ້ນ ອອກລະບຽບການ, ຄຳສັ່ງ, ຂໍ້ຕົກລົງຕ່າງໆ ເພື່ອຈ່າຍລ່ວງໜ້ານອກແຜນງົບປະມານແຫ່ງລັດ ດ້ວຍຮູບການດັ່ງນີ້:
   - 2.1. ອອກລະບຽບການ, ຄຳສັ່ງ, ຂໍ້ຕົກລົງ ແລະ ນິຕິກຳອື່ນໆ ເພື່ອນຳໃຊ້ງົບປະມານແຫ່ງລັດ, ເງິນບຳເນັດເກັບລາຍຮັບເກີນແຜນ, ຍອດເຫຼືອລາຍຈ່າຍ ແລະ ຍອດເຫຼືອງົບປະມານ ຈ່າຍຊຳລະສະສາງ ວຽກບໍລິຫານ, ວຽກນະໂຍບາຍ ແລະ ບັນດາໂຄງການຕ່າງໆ;
   - 2.2. ອະນຸຍາດໃຫ້ຜູ້ພັດທະນາ ໂຄງການ ຫຼື ຫົວໜ່ວຍຮັບເໝົາກໍ່ສ້າງພື້ນຖານໂຄງລ່າງ ເປັນຜູ້ດຳເນີນການກໍ່ສ້າງ ແລະ ຂຸດຄົ້ນຊັບສິນຕ່າງໆຂອງລັດ ໂດຍລັດເປັນຜູ້ຮັບຜິດຊອບໃນການຊຳລະ ດ້ວຍວິທີການຈົດຮັບ-ຈົດຈ່າຍ ລ່ວງໜ້ານອກແຜນງົບປະມານ;

2.3. ນຳໃຊ້ເງິນທີ່ໄດ້ມາຈາກການຂຸດຄົ້ນຊັບສິນຕ່າງໆຂອງລັດ ທີ່ຍັງບໍ່ທັນໄດ້ມອບເຂົ້າເປັນລາຍຮັບງົບປະມານ ແລະ ບໍ່ທັນມີແຜນຮອງຮັບເງິນຈຳນວນດັ່ງກ່າວ;

3. ຫ້າມ ຂະແໜງການ ຂັ້ນສູນກາງ-ທ້ອງຖິ່ນ ຈ່າຍລ່ວງໜ້າໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຢືມເງິນໄປນຳໃຊ້ທີ່ບໍ່ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;

4. ໃຫ້ອຳນາດການປົກຄອງ ທ້ອງຖິ່ນ ແຕ່ລະຂັ້ນ ລວມທັງ ຂະແໜງການເງິນ ຕ້ອງເພີ່ມທະວີຄວາມເປັນເຈົ້າການ ໃນການສະກັດກັ້ນ ແລະ ຍຸດຕິການຈ່າຍລ່ວງໜ້ານອກແຜນງົບປະມານແຫ່ງລັດ;

5. ໃຫ້ອຳນາດການປົກຄອງ ທ້ອງຖິ່ນ ແຕ່ລະຂັ້ນ ລວມທັງ ຂະແໜງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການເລັ່ງທວງ ແລະ ເກັບກູ້ຄືນ ໜີ້ສິນຄຸມເຄືອໃນໄລຍະຜ່ານມາ ດ້ວຍຮູບການດັ່ງນີ້:

5.1. ການຈ່າຍລ່ວງໜ້າທີ່ແກ່ຍາວຄຸມເຄືອມາຫຼາຍປີ ທີ່ຕິດພັນກັບຂໍ້ຕົກລົງຂອງອຳນາດການປົກຄອງ ຂັ້ນທ້ອງຖິ່ນ ແມ່ນມອບໃຫ້ອຳນາດການປົກຄອງ ແຕ່ລະຂັ້ນ ເປັນເຈົ້າການໃນການກວດກາ, ສັງລວມ ແລະ ຢັ້ງຢືນ ເອົາຕົວເລກການຈ່າຍລ່ວງໜ້າ ໃຫ້ລະອຽດ, ຈະແຈ້ງ, ຊັດເຈນ ແລະ ຄົ້ນຄ້ວາຈັດສັນ ໂດຍນຳໃຊ້ງົບປະມານ ທີ່ສະພາແຫ່ງຊາດຮັບຮອງ ເພື່ອສະສາງໜີ້ສິນດັ່ງກ່າວໃຫ້ຫຼຸດລົງ ຫຼື ໝົດໄປຢ່າງຂາດຕົວ;

5.2. ການຈ່າຍລ່ວງໜ້າທີ່ຕິດພັນກັບຫົວໜ່ວຍງົບປະມານ ທ້ອງຖິ່ນ ແຕ່ລະຂັ້ນ ໃຫ້ພາກສ່ວນກ່ຽວຂ້ອງເປັນເຈົ້າການ, ຮີບຮ້ອນປະສານສົມທົບກັບຂະແໜງງົບປະມານແຫ່ງລັດ ໃນຂັ້ນຂອງຕົນ ເພື່ອອະນຸມັດ ແລະ ປະກອບເອກະສານ ມາຊຳລະສະສາງການຈ່າຍລ່ວງໜ້າໃນລະບົບຄັງເງິນ;

5.3. ການຈ່າຍລ່ວງໜ້າທີ່ຕິດພັນກັບການຂາຍໄມ້ ( ລາຍຮັບມອບເຂົ້າງົບປະມານແລ້ວ, ສ່ວນລາຍຈ່າຍຍັງຄ້າງໃນລະບົບຄັງເງິນ ) ມອບໃຫ້ຂັ້ນທ້ອງຖິ່ນສັງລວມ ແລະ ນຳສະເໜີ ກະຊວງການເງິນ ( ກົມງົບປະມານແຫ່ງລັດ ) ສຳລັບລາຍຈ່າຍບໍລິຫານປົກກະຕິ ແລະ ນຳສະເໜີກະຊວງແຜນການ ແລະ ການລົງທຶນ ສຳລັບລາຍຈ່າຍໂຄງການລົງທຶນຂອງລັດ ເພື່ອເອົາເຂົ້າແຜນງົບປະມານ ໃນແຕ່ລະປີ ນຳສະເໜີສະພາແຫ່ງຊາດ ຮັບຮອງ ແລະ ປະກອບເອກະສານ ມາຊຳລະສະສາງການຈ່າຍລ່ວງໜ້າໃນລະບົບຄັງເງິນ;

5.4. ການຈ່າຍລ່ວງໜ້າທີ່ຕິດພັນກັບ ບຸກຄົນ, ນິຕິບຸກຄົນ ຫຼື ບໍລິສັດ ມອບໃຫ້ການຈັດຕັ້ງທີ່ອະນຸຍາດ ເປັນເຈົ້າການເລັ່ງທວງ ແລະ ເກັບກູ້ຄືນ ມາຊຳລະສະສາງການຈ່າຍລ່ວງໜ້າດັ່ງກ່າວ ໃນລະບົບຄັງເງິນ;

5.5. ການຈ່າຍລ່ວງໜ້າທີ່ຕິດພັນກັບ ບຸກຄົນ ກູ້ຢືມ ເຊິ່ງຜູ້ກ່ຽວ ຖືກຕັດອິດສະຫຼະພາບ ຫຼື ເສຍຊີວິດ ມອບໃຫ້ການຈັດຕັ້ງທີ່ອະນຸຍາດ ເປັນເຈົ້າການ ຄົ້ນຄ້ວາທາງອອກທີ່ເໝາະສົມ ມາຊຳລະສະສາງການຈ່າຍລ່ວງໜ້າໃນລະບົບຄັງເງິນ;

5.6. ກໍລະນີທີ່ຕິດພັນກັບ ບຸກຄົນ ( ເອົາເງິນງົບປະມານໄປນຳໃຊ້ບໍ່ຖືກເປົ້າໝາຍ ຫຼື ນຳໃຊ້ສ່ວນຕົວ ) ເຊິ່ງຜູ້ກ່ຽວ ຜ່ານຂະບວນການຍຸຕິທຳຕັດສິນແລ້ວ ມອບໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ ປະຕິບັດຕາມຄຳຕັດສິນຂອງສານປະຊາຊົນ ນຳເອົາບ້ວງເງິນດັ່ງກ່າວ ມາຊຳລະສະສາງການຈ່າຍລ່ວງໜ້າໃນລະບົບຄັງເງິນ;

6. ການຈ່າຍລ່ວງໜ້າທີ່ຕິດພັນກັບຂະແໜງການ ອ້ອມຂ້າງສູນກາງ ມອບໃຫ້ພາກສ່ວນກ່ຽວຂ້ອງ ຮີບຮ້ອນຄົ້ນຄ້ວາຈັດສັນ ແລະ ນຳໃຊ້ແຜນງົບປະມານປະຈຳປີ ທີ່ສະພາແຫ່ງຊາດ ຮັບຮອງ ເພື່ອປິດບັນຊີ ແລະ ສະສາງການຈ່າຍລ່ວງໜ້າ ( ເພື່ອມອບລາຍຮັບເຂົ້າງົບປະມານຄືນ ໃນສ່ວນທີ່ໄດ້ນຳໃຊ້ການຈ່າຍລ່ວງໜ້າໄປແລ້ວ );

7. ມອບໃຫ້ ບັນດາ ທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າແຂວງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ;

8. ຄຳສັ່ງແນະນຳສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຮອງນາຍົກລັດຖະມົນຕີ

ລັດຖະມົນຕີກະຊວງການເງິນ

ກະຊວງການເງິນ

ລັດຖະມົນຕີ

ສົມດີ ດວງດີ